## ຂ້າພະເຈົ້າຕ້ອງໄດ້ຂໍເອົາການຊ່ວຍເຫລືອອາຫານຂອງຂ້າພະເຈົ້າໂດຍຜ່ານໂຄງການ WASHCAP ບໍ່ ?

ພາຍໃຕ້ສະພາບການບາງຢ່າງ,ທ່ານຈະເລືອກທີ່ຈະໄດ້ຮັບໂຄງການ Basic Food ແທນທີ່ວ່າຈະແມ່ນ WASHCAP. ກະຣຸນາຕິດຕໍ່ຫາໂຄງການ WASHCAP ຖ້າຫາກວ່າທ່ານມີຄຳຖາມເພີ້ມເຕີມກ່ຽວກັບການຖອນຕົວອອກ.

## ທ່ານຕ້ອງໄດ້ຮູ້ຈັກຫຍັງແດ່ກ່ຽວກັບການໂອນການຊ່ວຍເຫລືອທາງເອເລກໂຕຣນິກ (EBT)?

- ຖ້າຫາກວ່າທ່ານມີບັດ Washington EBT ຢູ່ແລ້ວ, ທ່ານສາມາດໃຊ້ບັດໄດ້ ແລະ ເລກບັດປະຈຳຕົວ (PIN) ປັດຈຸບັນຂອງທ່ານ.
- ຖ້າຫາກວ່າທ່ານບໍ່ມີບັດ EBT ທ່ານສາມາດຮ້ອງຂໍໃຫ້ພວກເຮົາສົ່ງບັດໄປໃຫ້ທັງໄປສະນີ. EBT ບັດຈະມາຮອດພາຍໃນ 5-7 ວັນ ເຮັດການ.
- ທ່ານຈະໄດ້ຮັບປື້ມນ້ອຍແນະນຳມານຳບັດ EBT ຂອງທ່ານ.

## ທ່ານສາມາດເອົາບັດ EBT ຂອງທ່ານໃຫ້ຄົນໃດຄົນນຶ່ງເພື່ອຈະອອກຕະລາດໃຫ້ທ່ານໄດ້ບໍ່?

- ທ່ານບໍ່ຄວນຈັກເທື່ອທີ່ຈະເອົາບັດ EBT ຫລື ເລກ PIN ຂອງທ່ານໃຫ້ຄົນອື່ນ.
- ເພື່ອຈະອະນຸຍາດໃຫ້ຄົນອື່ນທີ່ຈະອອກຕະລາດໃຫ້ທ່ານ, ກະຣຸນາໂທຫາໂຄງການ WASHCAP ເພື່ອຈະຮ້ອງຂໍເອົາໃບຟອມອະນຸຍາດຜູ້ຖືບັດ EBT ສຳລອງ.

## ສິດທິ ແລະ ຄວາມຮັບຜິດຊອບຂອງທ່ານແມ່ນຫຍັງແດ່?

- ທ່ານມີສິດທີ່ຈະຮ້ອງຂໍເອົາການຟັງເຣື່ອງຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຄຳຕັດສິນທີ່ພວກເຮົາເຮັດລົງໄປກ່ຽວກັບການຊ່ວຍເຫລືອອາຫານຂອງທ່ານ.
- ທ່ານໄດ້ຖືກບົ່ງໃຫ້ລາຍງານການປ່ຽນແປງທຸກໆຢ່າງຢູ່ໃນສະພາບການຂອງທ່ານໄປຫາພະນັກງານຂອງ Social Security Administration (SSA) ຂອງທ່ານ.
- ທ່ານຍັງຈະໂທຫາ WASHCAP ໄດ້ອີກຄືກັນໄດ້ທີ່ 1-877-380-5784 ເພື່ອຈະເບິ່ງວ່າການປ່ຽນແປງເຫລົ່ານີ້ຈະສະທ້ອນເຖິງການຊ່ວຍເຫລືອອາຫານຂອງທ່ານ ຫລື ບໍ່.



Washington State
Department of Social & Health Services
Transforming lives

DSHS 22-480 LA (Rev. 4/18)

# WASHCAP

## ໂຄງການຄຳຮ້ອງຂໍລວມເຂົ້າໃສ່ກັນຂອງຣັດວໍຊິງຕັນ



## ການຊ່ວຍເຫລືອ WASHCAP ແມ່ນຫຍັງ?

- ການສໍາພາດສໍາລັບເງິນຊ່ວຍເຫລືອ SSI ຂອງທ່ານອາດຈະເປັນການສໍາພາດສໍາລັບການຊ່ວຍເຫລືອອາຫານຂອງທ່ານ.
- ພວກເຮົາຈະບໍ່ຂໍຮ້ອງໃຫ້ທ່ານຂຽນປະກອບໃບຟອມຫລາຍໃບ.
- ທ່ານຈະມີຣະຍະເວລາອະນຸມັດທີ່ດົນນານກວ່າ.
- ທ່ານຈະບໍ່ໄດ້ໄປຫາຫ້ອງການ Department of Social and Health Services (DSHS) ຈັກເທື່ອ.
- ການຊ່ວຍເຫລືອອາຫານຂອງທ່ານຈະເຂົ້າໄປຫາບັນຊີການໂອນການຊ່ວຍເຫລືອທາງເອເລກໂຕຣນິກ (EBT). ພວກເຮົາຈະສົ່ງບັດໄປໃຫ້ທ່ານເພື່ອຈະໃຊ້ເມື່ອເວລາທ່ານຊື້ເອົາອາຫານ. ບັດ EBT ຈະທໍາງານຄ້າຍຄືກັນກັບບັດທະນາຄານຫລືບັດເດບິດ.

## ຂ້າພະເຈົ້າສາມາດໄດ້ຮັບການຊ່ວຍເຫລືອອາຫານ WASHCAP ໄດ້ແນວໃດ?

ທ່ານຈະໄດ້ຮັບໂຄງການ WASHCAP ເມື່ອເວລາທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບການຊ່ວຍເຫລືອອາຫານ ແລະ ທ່ານ:

- ໄດ້ຮັບເງິນ SSI;
- ມີອາຍຸຢ່າງໜ້ອຍ 18 ປີ;
- ບໍ່ໄດ້ແຕ່ງງານ;
- ແຕ່ງງານແຕ່ບໍ່ໄດ້ອາສັຍຢູ່ນໍາຜົວເມັຽຂອງທ່ານ;
- ບໍ່ໄດ້ອາສັຍຢູ່ນໍາລູກຂອງທ່ານອາຍຸຕໍ່າກວ່າ 22 ປີ;
- ບໍ່ໄດ້ເຮັດວຽກຢູ່; ແລະ
- ອາສັຍຢູ່ຄົນດຽວ ຫລື ຊື້ເອົາ ແລະ ເຮັດກິນອາຫານຂອງທ່ານແຍກຈາກຄົນອື່ນຜູ້ທີ່ອາສັຍຢູ່ນໍາທ່ານ.



## ທ່ານຈະລາຍງານການປ່ຽນແປງໄດ້ຢ່າງໃດ?

- ລາຍງານການປ່ຽນແປງໄປຫາຫ້ອງການ Social Security (SSA) ໄດ້ທີ່ເລກ 1-800-772-1213.

## ການປ່ຽນແປງແນວໃດແດ່ທີ່ທ່ານຕ້ອງການເພື່ອຈະລາຍງານ ໄປຫາຫ້ອງການຄວາມປອດພັຍຂອງສັງຄົມ?

- ຣາຍໄດ້
- ຊັບສິນ
- ສະພາບການແຕ່ງງານ
- ສະພາບການເປັນຢູ່

## ເມື່ອໃດພວກເຮົາຈະກວດເບິ່ງເອກສານຂອງທ່ານຄືນ?

- ເມື່ອເວລາ SSA ກວດເບິ່ງເອກສານຂອງທ່ານຄືນ, ການຊ່ວຍເຫລືອອາຫານ WASHCAP ຂອງທ່ານຍັງຈະຖືກອະນຸມັດຕໍ່ອອກໄປໄດ້ອີກຄືກັນໃນຣະຫວ່າງການກວດເບິ່ງຄືນຂອງ SSA.
- ຖ້າຫາກວ່າ SSA ບໍ່ກວດເບິ່ງເອກສານຂອງທ່ານຄືນ, ພວກເຮົາຈະສົ່ງໃບຟອມໄປໃຫ້ທ່ານເພື່ອຈະຂຽນປະກອບແລະສົ່ງກັບຄືນມາກ່ອນທີ່ການຊ່ວຍເຫລືອຂອງທ່ານຈະຢຸດ.

## ໂຄງການອາຫານ WASHCAP ແມ່ນຫຍັງ?

WASHCAP ແມ່ນໂຄງການຄໍາຮ້ອງຂໍລວມເຂົ້າໃສ່ກັນຂອງຣັດວໍຊິງຕັນ. ມັນເປັນໂຄງການອາຫານພິເສດສໍາລັບບຸກຄົນຜູ້ທີ່ໄດ້ຮັບເງິນ SSI.

*ກະຣຸນາໂທຫາ **WASHCAP***
*ໄດ້ທີ່ເລກ **1-877-380-5784***
*ຖ້າຫາກວ່າທ່ານມີຄໍາຖາມແນວໃດ.*